**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ຫ້ອງການ

ເລກທີ 0808/ຫກ

ນະຄອນຫຼວງວຽງຈັນ, ວັນທີ 24 FEB 2025

# ແຈ້ງການ

**ຮຽນ:** ທ່ານ ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີການຈັດຕັ້ງປະຕິບັດມາດຕະການສຸຂານາໄມ ແລະ ສຸຂາໄມພືດໃຫ້ເຂັ້ມງວດໃນການກວດກາສັດຕູພືດ, ສານພິດຕົກຄ້າງ ສຳລັບ ການນຳເຂົ້າ ໝາກກ້ຽງ ແລະ ພືດຜັກ ຈາກຕ່າງປະເທດ.

- ອີງຕາມ ກົດໝາຍ ວ່າດ້ວຍ ການປ້ອງກັນ ແລະ ກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້, ສະບັບເລກທີ 2219/ກປ, ລົງວັນທີ 13 ເມສາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມປູກຝັງ ສະບັບເລກທີ 0945/ກປຝ, ລົງວັນທີ 14 ກຸມພາ 2025.

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ເພື່ອເພີ່ມທະວີຄວາມເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016 ເພື່ອໃຫ້ສອດຄ່ອງກັບສັນຍາສຸຂານາໄມ ແລະ ສຸຂານາໄມພືດ ຂອງອົງການການຄ້າໂລກ ແລະ ສົນທິສັນຍາວ່າດ້ວຍອົງການປ້ອງກັນພືດສາກົນ ທີ່ ສປປ ລາວ ເປັນພາຄີ ໂດຍສະເພາະການສະກັດກັ້ນການແຜ່ລະບາດ ຂອງສັດຕູພືດ ແລະ ການປົນເປື້ອນສານເຄມີ, ຢາປາບສັດຕູພືດຕົກຄ້າງໃນຜົນຜະລິດ ພືດຜັກ ແລະ ໝາກໄມ້ ສຳລັບ ການນຳເຂົ້າເພື່ອສ້າງຄວາມປອດໄພໃຫ້ແກ່ຜູ້ບໍລິໂພກຊຶ່ງໃນໄລຍະຜ່ານມາໄດ້ພົບເຫັນການລະບາດຂອງສັດຕູພືດ, ການປົນເປື້ອນສານເຄມີຂອງຢາປາບສັດຕູພືດໃນການຜະລິດພືດຜັກ ແລະ ໝາກໄມ້ຊະນິດຕ່າງໆ ໃນທ້ອງຕະຫຼາດໃຫ່ຍໃນນະຄອນຫຼວງວຽງຈັນ, ບາງທ້ອງຖິ່ນ, ຊຶ່ງມີຄວາມສ່ຽງທີ່ຈະສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍແກ່ພືດ, ສັດ, ຄົນ, ສິ່ງແວດລ້ອມ ແລະ ການຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ພາຍ ໃນປະເທດ ແລະ ຜົນຜະລິດກະສິກຳ ເພື່ອສົ່ງອອກ.

ສະນັ້ນ, ເພື່ອເປັນການປ້ອງກັນການແຜ່ລະບາດຂອງສັດຕູພືດ ແລະ ການປົນເປື້ອນສານເຄມີ ແລະ ຢາປາບສັດຕູພືດທີ່ນຳໃຊ້ໃນການຜະລິດ, ລວມທັງການຊຸກຍູ້ສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ໃຫ້ມີ ຄວາມປອດໄພໃຫ້ແກ່ຜູ້ບໍລິໂພກຂອງພືດຜັກ ແລະ ໝາກໄມ້ສົດ ຫ້ອງການກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງອອກແຈ້ງການດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້, ແຂວງ ແລະ ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ ເປັນເຈົ້າການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ນຳໃຊ້ມາດຕະການດ້ານສຸຂານາໄມ ແລະ ສຸຂານາໄມພືດ ໂດຍສະເພາະການກວດກາ ສັດຕູພືດ, ການປົນເປື້ອນສານເຄມີ ຂອງຢາປາບສັດຕູພືດຕົກຄ້າງ ໃນຜົນຜະລິດພືດຜັກ ແລະ ໄມ້ໃຫ້ໝາກ ກ່ອນການນຳເຂົ້າ ໂດຍສະເພາະແມ່ນໝາກກ້ຽງທີ່ເຮົາສາມາດຜະລິດເອງໄດ້ພາຍໃນ;
2. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ຊີ້ນຳຂະແໜງປູກຝັງ ແລະ ເຈົ້າໜ້າທີ່ກັກກັນພືດ ເພື່ອປະສານສົມທົບກັບສູນປ້ອງກັນພືດ ເພີ່ມທະວີການ ກວດກາ, ຢັ້ງຢືນ ສັດຕູພືດ ແລະ ສານປົນເປື້ອນສານເຄມີຕົກຄ້າງ ໃຫ້ຖີ່ຂຶ້ນກ່ວາເກົ່າ ກ່ອນການນຳເຂົ້າຢູ່ດ່ານ ສຳລັບ ໝາກກ້ຽງ ແລະ ພືດຜັກ ຖ້າພົບເຫັນແມ່ນບໍ່ອະນຸຍາດໃຫ້ນຳເຂົ້າ ແລະ ປະຕິບັດຕາມລະບຽບການທີ່ກຳນົດໄວ້;

3. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ຊີ້ນຳຂະແໜງປູກຝັງ ແລະ ເຈົ້າໜ້າທີ່ກັກກັນພືດ ເພື່ອປະສານສົມທົບກັບສູນປ້ອງກັນພືດ ແລະ ຜູ້ປະກອບການທີ່ຄຸ້ມຄອງຕະຫຼາດສົດໃນນະຄອນຫຼວງວຽງຈັນ ຫຼື ບັນດາແຂວງ ໃນຂອບເຂດທົ່ວປະເທດ ເພື່ອລົງກວດກາຕິດຕາມ ແລະ ວິໄຈສານປົນເປື້ອນໃນພືດຜັກ ແລະ ໝາກໄມ້ ຢູ່ຈຸດຈຳໜ່າຍ ແລະ ທ້ອງຕະຫຼາດສົດໃນຂອບເຂດທົ່ວປະເທດ;
4. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ ແລະ ຂະແໜງອື່ນການທີ່ກ່ຽວຂ້ອງຂັ້ນທ້ອງຖິ່ນ ເພື່ອຄົ້ນຄວ້າປຶກສາຫາລື ເປັນ ເອກະພາບເພື່ອສ້າງກົນໄກ ແລະ ມາດຕະການໃນການຄຸ້ມຄອງ ແລະ ການນຳເຂົ້າ ໝາກກ້ຽງ ແລະ ພືດຜັກ ຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີໃນຂອບເຂດທົ່ວປະເທດ;
5. ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ແລະ ກົມປູກຝັງ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເຜີຍແຜ່, ຊຸກຍູ້, ຕິດຕາມ, ກວດກາ ແລະ ລາຍງານການຈັດຕັ້ງປະຕິບັດໃຫ້ກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ ໃນແຕ່ລະໄລຍະ ເພື່ອແກ້ໄຂໃຫ້ທັນກັບສະພາບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າຫ້ອງການ**

**ໂສພາ ສິດທິໂສບ**

**ບ່ອນນຳສົ່ງ:**

| | | |
|---|---|---|
| 1. | ທ່ານ ລມຕ, ຮລມຕ ກປ ທ່ານ ລະ | 01 ສະບັບ; |
| 2. | ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ ບ່ອນລະ | 01 ສະບັບ; (ເພື່ອຊຸກຍູ້) |
| 3. | ກົມປູກຝັງ | 01 ສະບັບ; (ເພື່ອຕິດຕາມ) |
| 4. | ພະແນກຄົ້ນຄວ້າ ແລະ ສັງລວມ | 01 ສະບັບ; (ເພື່ອຕິດຕາມ) |
| 5. | ພະແນກເລຂານຸການ ແລະ ພິທີການ | 01 ສະບັບ. (ເກັບມ້ຽນ) |